# ທ່ານສົນໃຈຝຶກງານກັບສະຖາບັນ ILSTA ຢູ່ລາວບໍ່?

**ສະຖາບັນຊ່ວຍເຫຼືອດ້ານກົດໝາຍ ແລະ ວິຊາການ** ຫຼື ເອີ້ນຫຍໍ້ວ່າ **ILSTA** ເປັນສະຖາບັນໜຶ່ງທີ່ສ້າງຕັ້ງຂຶ້ນ ໂດຍ ຜູ້ຊ່ຽວຊານດ້ານກົດໝາຍ ທີ່ມາຈາກອົງການພັດທະນາລະດັບສາກົນ ແລະ ລະດັບປະເທດ, ນັກວິຊາການ ແລະ ພາກເອກະຊົນ. ສະຖາບັນ ILSTA ແມ່ນສະຖາບັນນິຕິບຸກຄົນ ທີ່ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນ ໃນປະເທດລຸກຊໍາບວກ ແລະ ໄດ້ເຮັດວຽກໃນນາມເປັນຄູ່ຮ່ວມມືກັບອົງການຮ່ວມມືເພື່ອການພັດທະນາຂອງປະເທດ ລຸກຊໍາບວກ. ນະໂຍບາຍຂອງສະຖາບັນ ILSTA ແມ່ນເພື່ອຕອບສະໜອງໂດຍກົງຕໍ່ຄວາມຕ້ອງການທາງດ້ານ ການຝຶກອົບຮົມ ແລະ ການສ້າງຄວາມເຂັ້ມແຂງໂດຍການປະສານຮ່ວມມື ກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດຖະບານ.

ທີມງານສາກົນຂອງສະຖາບັນດໍາເນີນວຽກງານຢ່າງໃກ້ຊິດກັບບັນດາອົງການຈັດຕັ້ງລັດ ແລະ ຄູ່ຮ່ວມມືເພື່ອການພັດທະນາໃນຫຼາຍຂົງເຂດທີ່ແຕກຕ່າງກັນ. ເນື່ອງຈາກວ່າທາງສະຖາບັນສະໜອງການຊ່ວຍເຫຼືອດ້ານການພັດທະນາທັກສະຄວາມສາມາດ, ການປະຕິບັດວຽກງານຈຶ່ງມີຄວາມຫຼາກຫຼາຍ ເຊິ່ງປະກອບດ້ວຍການເຮັດບົດຄົ້ນຄວ້າ, ກ່ານຈັດຝຶກອົບຮົມ, ການພັດທະນາອຸປະກອນການສຶກສາ, ການສື່ສານ ແລະ ການເຜີຍແຜ່ຂໍ້ມູນຂ່າວສານ.

**ສະຖາບັນ ILSTA ກໍາລັງຊອກຫາ ນັກສຶກສາຝຶກງານ (ໄລຍະ 3-6 ເດືອນ)**

ເງື່ອນໄຂຂອງນັກສຶກສາຝຶກງານຢູ່ສະຖາບັນ ILSTA:

- ມີພື້ນຖານທາງດ້ານກົດໝາຍ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
- ມີປະສົບການເຮັດວຽກກັບຫຼາຍກຸ່ມຄົນທີ່ມີພື້ນຖານດ້ານການສຶກສາ ແລະ ວັດທະນະທໍາທີ່ແຕກຕ່າງກັນ;
- ເຮັດວຽກເປັນທີມໄດ້ດີ, ມີຄວາມສົນໃຈໃນຫຼາຍໜ້າວຽກ;
- ມີລະດັບພາສາອັງກິດດີ ສາມາດສື່ສານໄດ້

ສະຖາບັນ ILSTA ສະໜອງ:

- ໜ້າວຽກທີ່ຫຼາກຫຼາຍ ແລະ ໜ້າສົນໃຈ ພ້ອມທັງສະພາບແວດລ້ອມທີ່ສ້າງສັນ
- ພັດທະນາລະດັບຄວາມຮູ້ ແລະ ຄວາມສາມາດ ຂອງນັກສຶກສາຝຶກງານ
- ເປີດໂອກາດໃຫ້ນັກສຶກສາຝຶກງານໄດ້ມີປະສົບການເຮັດວຽກໃນຂົງເຂດການພັດທະນາ

ຖ້າທ່ານມີຄວາມສົນໃຈ, ທ່ານສາມາດສົ່ງ CV ແລະ Motivation Letter ໄປທີ່ອີເມວ: contact@ilsta.org ພ້ອມທັງອະທິບາຍວ່າ ທ່ານເຊື່ອໝັ້ນວ່າຕົນເອງຈະສາມາດປະກອບສ່ວນໃນການເຮັດວຽກຂອງສະຖາບັນແນວໃດ.

www.ilsta.org